Pathetlao
Friday, March 02, 2018
Page 1 & 2

# ສື່ມວນຊົນຢ້ຽມຢາມໂຄງການຮ່ວມມື ເພື່ອການພັດທະນາຂອງຍີ່ປຸ່ນ ຢູ່ລາວ

☛ ອ່ານຕໍ່ໜ້າ 2



## ສື່ມວນຊົນ...

ຂປລ. ໃນລະຫວ່າງວັນທີ 1-2 ມີນາ 2018, ບັນດາສື່ມວນຊົນລາວໄດ້ໄປເຄື່ອນໄຫວຢ້ຽມຢາມ 4 ໂຄງການຮ່ວມມື ເພື່ອການພັດທະນາຂອງປະເທດຍີ່ປຸ່ນ ທີ່ໄດ້ຊ່ວຍເຫລືອ ສປປ ລາວ ເຊັ່ນ: ໂຄງການອາສາສະໝັກທີ່ໂຮງໝໍເມືອງທຸລະຄົມ ແຂວງວຽງຈັນ, ໂຄງການຂະຫຍາຍເຂື່ອນໄຟຟ້ານ້ຳງື່ມ 1, ໂຄງການຂະຫຍາຍອາຄານຜູ້ໂດຍສານສະໜາມບິນສາກົນວັດໄຕ ແລະ ໂຄງການເສີມຂະຫຍາຍປະສິດທິພາບຂອງວິສາຫະກິດລົດເມນະຄອນຫລວງວຽງຈັນ. ທັງນີ້ ເພື່ອເປີດໂອກາດໃຫ້ບັນດາສື່ມວນຊົນຈາກພາກສ່ວນຕ່າງໆ ໄດ້ຮັບຮູ້ຢ່າງເລິກເຊິ່ງ ແລະ ນຳໄປໂຄສະນາເຜີຍແຜ່ກ່ຽວກັບການຮ່ວມມືເພື່ອການພັດທະນາຂອງຍີ່ປຸ່ນທີ່ມີຕໍ່ ສປປ ລາວ.

ທ່ານ ຄາຊຶຣິໂຣະ ຄຸໂນະ ອຸປະທູດຍີ່ປຸ່ນ ປະຈຳ ສປປ ລາວ ໄດ້ໃຫ້ຮູ້ວ່າ: ການຢ້ຽມຢາມທັດສະນະສຶກສາຂອງສື່ມວນຊົນໃນຄັ້ງນີ້ ແມ່ນຈັດຂຶ້ນຄັ້ງທຳອິດນັບແຕ່ມີການສ້າງຕັ້ງສາຍພົວພັນການທູດລະຫວ່າງຍີ່ປຸ່ນ ແລະ ລາວ ໃນປີ 1955 ເຊິ່ງ

ສປປ ລາວ.

ຂ່າວ:ສົມຫວັງ-ພາບ:ແສງທອງ